ຍາຕິບໍລິ
ການທະ
ທີ່ ພາສາ
ນຍາຕິຕໍ່
ກສູດຊັ້ນ
ບາຄານ
ລະ ພາ
ກສຶກສາ

ຮຽນຂອງ
ງອອກ
ວິທະຍາ
າ ໄດ້
ລະ ທັບ
ຍ້ອນພັກ
ສະໜູບ
ນສຶກສາ
ອນຢູ່ໃນ
ປີຄວາມ
ວນຢ່າງ
ກຮັບໃຊ້
ເສດຖະ
ໄດ້ຊ່ວຍ
ກສຶກສາ
ໃນໂອ
ວງວຽງ
ຊາດທີ 2
ງໆຂອງ
ະກິດໄຊ
ນຢ່າງ
າວ ເປັນ
ສີລະປະ
ຮຽນເຊິ່ງ
ອສັງຄົມ
າງຫ້ອງ
ເຈົ້າໂຮງ
ຮຽນຢູ່
) ລ້ານ
ກິດວິທະ
ກສ້າງ
ະ ປະ
ໃຫ້ນັບ
່າພາດ
່າສອນ
ຍາໄລ

... ວັນທີ 17 ພະຈິກ 2010 ຜ່ານມານີ້.

... ການບໍລິຫານຄວາມສ່ຽງ ຕິດ

... ຂອງສົນທິສັນຍາເກືອດຫ້າມລະເບີດລູກຫວ່ານ (ບົມບີ່) ແລະ ສ້າງຕັ້ງກອງທຶນພິເສດ ລະຫວ່າງຊາດທີ່ເປັນໜຶ່ງທາງເລືອກ ເພື່ອສະໜັບສະໜູນການຈັດຕັ້ງສົນທິສັນຍາ ໂດຍສອດຄ່ອງກັບບັນດາຫຼັກການຂອງຖະແຫຼງການວຽງຈັນຕື່ມອີກ.

# ແຂວງສະຫວັນນະເຂດ ໄດ້ຮັບທຶນການສຶກສາ ຈາກ EDF ໑.໒໖໐ ທຶນ



✻ ກອງທຶນການສຶກສາເພື່ອການພັດທະນາ(EDF-LAO) ໄດ້ນຳພາຄະນະໂຄງການ Merry Music Project ຮ່ວມກັບກອງທຶນການສຶກສາ ເພື່ອການພັດທະນາຍີ່ປຸ່ນ (EDF-JAPAN) ລົງຢ້ຽມຢາມ ແລະ ຈັດກິດຈະກຳຮ່ວມກັບນັກຮຽນປະຖົມບ້ານໂພນສະຫວ່າງ ເມືອງອຸທຸມພອນ ແຂວງສະຫວັນນະເຂດ ໃນລະຫວ່າງວັນທີ 24-25 ພະຈິກ 2010.

ກິດຈະກຳທີ່ລົງໄປຈັດຕັ້ງປະຕິບັດຄັ້ງນີ້ ປະກອບດ້ວຍການຮ້ອງເພງ ແບ່ງກຸ່ມນັກຮຽນເພື່ອຄົ້ນຄ້ວາກ່ຽວກັບວິທີການເຕັ້ນປະກອບທ່າທາງການຖູແຂ້ວ ແລະ ຖ່າຍຮູບເອົານ້ອງນ້ອຍນັກຮຽນກຳລັງຫົວ ເພື່ອຈະນຳໄປຜະລິດເປັນຄັນຮົ່ມ ເປັນປຶດສະຕິ ແລະ ນຳໄປສະເໜີຂໍທຶນຈາກຜູ້ໃຫ້ທຶນຢູ່ປະເທດຍີ່ປຸ່ນ ແລະ ນຳທຶນມາຊ່ວຍເຫຼືອເດັກນ້ອຍດັ່ງກ່າວ ທ່ານ ໂກຈິ ມິຊູຕານິ ຜູ້ຈັດການໂຄງການ Merry Music Project ເວົ້າວ່າ: ໂຄງການ Merry Music Project ສ້າງຂຶ້ນ 10 ກວ່າປີຜ່ານມາ ເຊິ່ງໄດ້ມີການບັນທຶກພາບ ສຽງ ຮອຍຍິ້ມ ແລະ ຄວາມກະຕືລືລົ້ນຂອງເດັກນ້ອຍນັກຮຽນ ວ່າອະນາຄົດເຂົາເຈົ້າຢາກມີອາຊີບຫຍັງ ເຊິ່ງ ສປປ ລາວ ແມ່ນປະເທດທີ 27 ທີ່ໂຄງການນີ້ໄດ້ເຂົ້າມາຈັດກິດຈະກຳຍ້ອນວ່າຮອຍຍິ້ມແມ່ນປຽບເໝືອອະນາຄົດ ກໍຄືເດັກນ້ອຍປຽບເໝືອອະນາຄົດຂອງຊາດ ສະນັ້ນການມີຮອຍຍິ້ມທີ່ສວຍງາມກໍປຽບເໝືອນການປາສະຈາກສົງຄາມ ໂດຍສຽງທີ່ອັດນັ້ນຈະນຳໄປປະດິດເປັນເພງ ແລະ ພາບແມ່ນຈະນຳໄປຜະລິດເປັນຄັນຮົ່ມ ປຶດສະຕິ ແລະ ອື່ນໆ ເພື່ອໃຫ້ມວນຊົນຮັບຮູ້ກ່ຽວກັບປະຊາຊົນ ແລະ ປະເທດລາວຫຼາຍຂຶ້ນ ທ່ານນາງ ຄຳສະຫວ່າງ ຈັນທະໄລ ຜູ້ຈັດການລະດັບກາງ EDF-LAO ເວົ້າວ່າ: EDF-LAO ໄດ້ເລີ່ມສຳຫຼວດປີ 1995 ແລະ ໄດ້ຈັດຕັ້ງປະຕິບັດປີ 1997 ປະກອບມີ 4 ແຂວງ ຄື: ຄຳມ່ວນ ສະຫວັນນະເຂດ ສາລະວັນ ແລະ ເຊກອງ ກິດຈະກຳຫຼັກແມ່ນໃຫ້ທຶນການສຶກສາສຳລັບນັກຮຽນປະຖົມ ແລະ ມັດທະຍົມ ໂດຍປີນີ້ແຂວງສະຫວັນນະເຂດໄດ້ຮັບທຶນການສຶກສາທັງໝົດ 1.260 ທຶນ (ທຶນລະ



500.000 ກວ່າກີບ) ມີທຶນກໍ່ສ້າງໂຮງຮຽນ ຕູ້ສະໝຸດ ສ້າງຄູຊົນເຜົ່າ ສ້າງຄູປະລິນຍາໂທ ນອກນີ້ຍັງມີອຸປະກອນກິລາ ແລະ ເຄື່ອງໃຊ້ຫ້ອງການປະກອບໃຫ້ໂຮງຮຽນເປົ້າໝາຍ ໂດຍທຶນແຕ່ລະປີນັ້ນແມ່ນອີງຕາມການສະໜອງຂອງ EDF-JAPAN ສຳລັບໂຄງການ Merry Music Project ແມ່ນໂຄງການສ້າງຂຶ້ນໃໝ່ໂດຍການມາຈັດກິດຈະກຳຄັ້ງນີ້ ເພື່ອເກັບກຳຂໍ້ມູນນຳໄປຜະລິດສິ່ງທີ່ເວົ້າຂ້າງເທິງເພື່ອນຳສະເໜີຂໍທຶນ.

**ຂ່າວຍັງແຈ້ງໃຫ້ຮູ້ອີກວ່າ:** ໂອກາດລົງຈັດກິດຈະກຳຄັ້ງນີ້ ຄະນະດັ່ງກ່າວ ຍັງໄດ້ຈັດກິດຈະກຳການຫຼິ້ນດົນຕີ ອອກແບບການເຕັ້ນປະກອບທ່າທາງການຖູແຂ້ວ ແລະ ຖ່າຍຮູບຮ່ວມກັບນັກຮຽນປະຖົມບ້ານໂພນຕູມ ແລະ ໂຮງຮຽນປະຖົມບ້ານນາ ເມືອງອຸທຸມພອນ ແຂວງສະຫວັນນະເຂດ ອີກດ້ວຍ.